**ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ**

# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 15
## ທວນຄືນບົດຮຽນ
## Review lesson




**ບັນຫາທີ່ຕ້ອງການໃຫ້ເນັ້ນໜັກແມ່ນ ມີ 02 ບັນຫາ: ຄວາມ ໝາຍ ແລະ ຄວາມສຳຄັນກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດໂຖະກິດ**

1. **ຄວາມໝາຍ**

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແມ່ນການແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດດ້ວຍການໄກ່ເກ່ຍ ຫຼືການຕັດສິນຊຶ່ງດຳເນີນໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ໝາຍຄວາມວ່າ ແມ່ນການແກ້ໄຂບັນຫາທີ່ບໍ່ຖືກຕ້ອງປອງດອງກັນ,ຂັດແຍ່ງກັນທາງດ້ານສິດແລະຜົນປະໂຫຍດຂອງຄູ່ກໍລະນີທີ່ເກີດຂຶ້ນຈາກການລະເມີດສັນຍາທາງດ້ານເສດຖະກິດ,ການ ດຳເນີນທຸລະກິດ ເປັນຕົ້ນ ການຄ້າ, ການລົງທຶນ, ການບໍລິການ ແລະ ອື່ນໆ ທີ່ກໍໃຫ້ເກີດມີຄວາມເສຍຫາຍ ຊຶ່ງອາດພາໃຫ້ມີການຮ້ອງຂໍ ເພື່ອໃຫ້ມີການພິຈາລະນາແກ້ໄຂດ້ວຍຮູບການໄກ່ເກ່ຍຫຼືຮູບການຕັດສິນບົນພື້ນຖານຄວາມສະໝັກໃຈຂອງຄູ່ກໍລະນີ ຊຶ່ງອາດສະແດງອອກໃນຂໍ້ກຳນົດທີ່ຄູ່ກໍລະນີໄດ້ຕົກລົງກັນໄວ້ໃນສັນຍາ ຫຼືພາຍຫຼັງຂໍ້ຂັດແຍ່ງເກີດຂຶ້ນແລ້ວ

ຄູ່ກໍລະນີ ສະໝັກໃຈໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແມ່ນທາງເລືອກໜຶ່ງຂອງຄູ່ກໍລະນີ ທີ່ດຳເນີນການແກ້ໄຂນອກລະບົບສານ ມີລັກສະນະວິຊາຊີບສະເພາະດ້ານ ຊຶ່ງຜົນຂອງການແກ້ໄຂສາມາດນຳໄປຈັດຕັ້ງປະຕິບັດຢູ່ລັດພາຄີຂອງສົນທິສັນຍາ ນິວຢ໋ອກ 1958 ວ່າດ້ວຍການຮັບຮູ້ ແລະ ການບັງຄັບປະຕິບັດຄຳຕັດສິນຂອງຄະນະກຳມະການຕ່າງປະເທດ ແລະ ສົນທິສັນຍາສິງກະໂປ 2019 ວ່າດ້ວຍການໄກ່ເກ່ຍ.

## 2. ຄວາມສຳຄັນ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຄວາມສຳຄັນຫຼາຍເພາະວ່າແມ່ນກົນໄກ ແກ້ໄຂຂໍ້ຂັດແຍ່ງທີ່ຮັບປະກັນສິດ ແລະ ຜົນປະໂຫຍດຂອງຄູ່ກໍລະນີຊຶ່ງສະແດງອອກດັ່ງນີ້:

- ເປັນລະບົບການແກ້ໄຂຂໍ້ຂັດທີ່ສ້າງຂຶ້ນໂດຍລັດ ແລະ ຖືກຮັບຮູ້ໂດຍສາກົນ ປະກອບສ່ວນທີ່ສຳຄັນເຂົ້າໃນການຫຼຸດຜ່ອນການແກ້ໄຂຄະດີຢູ່ສານປະຊາຊົນ;

- ເປັນການຫັນເຂົ້າສູ່ລະບົບການແກ້ໄຂຂໍ້ຂັດແຍ່ງສາກົນເທື່ອລະກ້າວ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ຄູ່ກໍລະນີ, ຜູ້ໄກ່ເກ່ຍ ຫຼືຜູ້ຕັດສິນ ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ເປັນການແກ້ໄຂບັນຫາທີ່ແທດເໝາະກັບສະພາວະຄວາມເປັນຈິງຂອງຂໍ້ຂັດແຍ່ງບົນພື້ນຖານຄວາມສະໝັກໃຈຂອງຄູ່ກໍລະນີ ໂດຍບໍ່ມີການບັງຄັບ, ນາບຂູ່, ບໍ່ມີການຈຳແນກເພດ, ເຊື້ອຊາດ, ສາສະໜາ, ສັນຊາດ, ເຜົ່າຊົນ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລຳເນົາ, ບໍ່ເຂົ້າຂ້າງອອກຂາ, ບໍ່ມີການແຊກແຊງຈາກພາຍນອກ, ຖືເອົາຄຸນນະທຳ, ເຫັນອົກເຫັນໃຈກັນຂອງຄູ່ກໍລະນີ, ມີການຜ່ອນຜັນ ຫຼື ຍິນຍອມກັນລະຫວ່າງຄູ່ກໍລະນີ ແລະ ພິຈາລະນາແກ້ໄຂບົນພື້ນຖານກົດໝາຍ ແລະລະບຽບການ;

- ເປັນວິທີການແກ້ໄຂຂໍ້ຂັດແຍ່ງ ທີ່ຍຸຕິທຳ, ມະນຸດສະທຳ ແລະ ມີຂະບວນການດຳເນີນທີ່ກະທັດຮັດ, ຜົນຂອງການແກ້ໄຂບໍ່ສາມາດອຸທອນໄດ້ ເຮັດໃຫ້ຄູ່ກໍລະນີປະຢັດຄ່າໃຊ້ຈ່າຍ ແລະ ເວລາ;

- ຂໍ້ຂັດແຍ່ງທີ່ຖືກນຳມາພິຈາລະນາແກ້ໄຂນັ້ນ ແມ່ນບໍ່ສາມາເປີດເຜີຍສູ່ສັງຄົມ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີ;

-ປະກອບສ່ວນອັນສຳຄັນເຂົ້າໃນການສ້າງຄວາມເປັນລະບຽບຮຽບຮ້ອຍໃຫ້ແກ່ສັງຄົມ ແນໃສ່ເຮັດໃຫ້ການພັດທະນາເສດຖະກິດ - ສັງຄົມຂະຫຍາຍຕົວ ແລະ ຍືນຍົງ;

- ເປັນຕົວຊີ້ວັດໜຶ່ງທີ່ສຳຄັນໃນການຂັບເຄື່ອນ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດ.

# LECTURE 2

# ອົງການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດຢູ່ ສປປ ລາວ

# ECONOMIC DISPUTE RESOLUTION ORGANIZATION IN LAO PDR

**ບັນຫາທີ່ຕ້ອງເນັ້ນໜັກໃນບົດນີ້ແມ່ນມີ 02 ບັນຫາ: ສິດ ແລະ ໜ້າທີ່ ຂອງ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສກຖະກິດ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

## 1. ສິດ ແລະ ໜ້າທີ່ ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ດຳເນີນໄປຕາມຫຼັກການ, ຖືກຕ້ອງ ຕາມຫຼັກວິຊາສະເພາະ ແລະ ສາມາດຮອງຮັບການບໍລິການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ ໃຫ້ດຳເນີນໄປຕາມທິດການສ້າງລັດທີ່ປົກຄອງດ້ວຍກົດໝາຍ. ສະນັ້ນ, ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈຶ່ງມີສິດ ແລະ ໜ້າທີ່ ດັ່ງນີ້ [1]:

1) ຄົ້ນຄວ້າ ແລະ ສະເໜີສ້າງ, ປັບປຸງລະບຽບການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ກະຊວງຍຸຕິທຳພິຈາລະນາ;

2) ຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະມົນຕີກະຊວງຍຸຕິທຳ ເພື່ອແຕ່ງຕັ້ງ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ເຂົ້າໃນບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ ຫຼື ປົດບຸກຄົນດັ່ງກ່າວ ອອກຈາກບັນຊີ;

3) ໂຄສະນາ, ສຶກສາອົບຮົມກົດໝາຍ, ລະບຽບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4) ພິຈາລະນາ ແຕ່ງຕັ້ງ ຫຼື ປ່ຽນຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກຳມະການຕັດສິນ ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງແຕ່ລະຄັ້ງ ຕາມກົດໝາຍ;

5) ໃຫ້ຄຳປຶກສາ, ແນະນຳຄູ່ກໍລະນີ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;

6) ຄຸ້ມຄອງຂໍ້ມູນ, ຂ່າວສານ, ເກັບກຳບັນທຶກການໄກ່ເກ່ຍ ຫຼື ການຕັດສິນ ແລະ ອຳນວຍຄວາມສະດວກໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;

7) ຮັບຄຳຮ້ອງ, ເອກະສານ, ຂໍ້ມູນ, ຫຼັກຖານ ຈາກຄູ່ກໍລະນີ ເພື່ອມອບໃຫ້ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກຳມະການຕັດສິນ;

---

[1] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018 ມາດຕາ 60

8) ສ້າງ, ບຳລຸງ ແລະ ຍົກລະດັບທາງດ້ານວິຊາການ ໃຫ້ແກ່ຜູ້ໄກ່ເກ່ຍ, ຜູ້ຕັດສິນ ແລະ ພະນັກງານຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

9) ຕິດຕໍ່ພົວພັນກັບຄູ່ກໍລະນີ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຫຼື ຜູ້ຕັດສິນ , ຄະນະກຳມະການຕັດສິນ;

10) ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

11) ຊີ້ນຳດ້ານວິຊາການ ໃຫ້ແກ່ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

12) ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການມອບໝາຍຂອງຂັ້ນເທິງ;

13) ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕໍ່ກະຊວງຍຸຕິທຳ ຢ່າງເປັນປົກກະຕິ;

14) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**2. ສິດ ແລະ ໜ້າທີ່ ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

- ນຳສະເໜີຫາ ສກສ ເພື່ອຄົ້ນຄວ້າກ່ຽວກັບການແຕ່ງຕັ້ງ ຜູ້ໄກ່ເກ່ຍ ແລະ ຜູ້ ຕັດສິນ ເຂົ້າໃນບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ ຫຼື ປົດບຸກຄົນດັ່ງກ່າວ ອອກຈາກບັນຊີ ຕໍ່ລັດຖະມົນຕີກະຊວງຍຸຕິທຳ ເພື່ອພິຈາລະນາ;

- ໂຄສະນາ, ສຶກສາອົບຮົມກົດໝາຍ, ລະບຽບການ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະ ກິດ;

- ພິຈາລະນາ ແຕ່ງຕັ້ງ ຫຼື ປ່ຽນຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກຳມະການຕັດສິນ ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງແຕ່ລະຄັ້ງ ຕາມກົດໝາຍ;

- ໃຫ້ຄຳປຶກສາ, ແນະນຳຄູ່ກໍລະນີ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;

- ຄຸ້ມຄອງຂໍ້ມູນ, ຂ່າວສານ, ເກັບກຳບັນທຶກການໄກ່ເກ່ຍ ຫຼື ການຕັດສິນ ແລະ ອຳນວຍຄວາມສະດວກໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;

- ຮັບຄຳຮ້ອງ, ເອກະສານ, ຂໍ້ມູນ, ຫຼັກຖານ ຈາກຄູ່ກໍລະນີ ເພື່ອມອບໃຫ້ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກຳມະການຕັດສິນ;

- ຕິດຕໍ່ພົວພັນກັບຄູ່ກໍລະນີ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກຳມະການຕັດສິນ;

- ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕາມການມອບໝາຍຂອງຂັ້ນເທິງ;

- ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ຕໍ່ກະຊວງຍຸຕິທຳຢ່າງເປັນປົກກະຕິ;

- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# LECTURE 3

# ຂໍ້ກຳນົດສາກົນກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ

# INTERNATIONAL PROVISIONS ON DISPUTE RESOLUTION

**ບັນຫາທີ່ຕ້ອງເນັ້ນໜັກໃນບົດນີ້ແມ່ນມີ 01 ບັນຫາ: ສະພາການຄ້າສາກົນແມ່ນຫຍັງ?**

- **ສະພາການຄ້າສາກົນ ( ICC )**

ສະພາການຄ້າສາກົນ International Chamber of Commerce ( ICC) ແມ່ນອົງການທຸລະກິດສາກົນ, ໃຫ້ການຊ່ວຍເຫຼືອໃນການດຳເນີນທຸລະກິດ ໃຫ້ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ. ອົງການນີ້ ໄດ້ຮັບການສ້າງຕັ້ງຂຶ້ນພາຍຫຼັງສົງຄາມໂລກຄັ້ງທີ I, ເປັນອົງການສົ່ງເສີມການຄ້າ ລະຫວ່າງປະເທດ ເພື່ອແນໃສ່ເປີດກວ້າງການຄ້າ, ການບໍລິການ ແລະ ການໄຫຼວຽນຂອງທຶນຢ່າງເສລີ ທັງເປັນການປົກປ້ອງ ການທຸ້ມຕະຫຼາດ. ອົງການ ICC ປະຕິບັດສາມກິດຈະກຳຕົ້ນຕໍ ເຊັ່ນ: ການສ້າງກົດລະບຽບ, ການແກ້ໄຂຂໍ້ຂັດແຍ່ງ ແລະ ການສະໜັບສະໜູນການວາງນະໂຍບາຍການຄ້າ.

ການແກ້ໄຂຂໍ້ຂັດແຍ່ງ ຂອງອົງການ ICC ແມ່ນໜ່ວຍງານທີ່ມີຊື່ວ່າ The International Court of Arbitration, ເປັນອົງການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ມີຄວາມເປັນເອກະລາດ ຊຶ່ງເປັນໜ່ວຍງານທີ່ມີສິດ ແລະ ໜ້າທີ່ ຮັບຜິດຊອບບໍລິການ-ການຕັດສິນຂໍ້ຂັດແຍ່ງ. ຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງອົງການນີ້ ແມ່ນນຳໃຊ້ຮູບແບບ ຄື: ການໄກ່ເກ່ຍ ແລະ ການຕັດສິນ ນອກລະບົບສານ. ນອກຈາກນີ້ ຍັງມີພາລະບົດບາດວາງລະບຽບການ ແລະ ໃຫ້ຄວາມຮູ້ກ່ຽວກັບການສ້າງສັນຍາ, ທັກສະການແກ້ໄຂຂໍ້ຂັດແຍ່ງ.

# LECTURE 4

## ຈັນຍາບັນ ຂອງພະນັກງານໄກ່ເກ່ຍ ແລະ ພະນັກງານຕັດສິນ

## ETHICS OF MEDIATORS AND ADJUDICATORS

**ບັນຫາທີ່ຕ້ອງເນັ້ນໜັກໃນບົດນີ້ແມ່ນ: ຈັນຍາບັນ ຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ**

ຈັນຍາບັນຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ແມ່ນການປະພຶດທີ່ດີ ລວມທັງການປະຕິບັດໜ້າທີ່ວຽກງານຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ໃນການພິຈາລະນາແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢ່າງເປັນທຳ, ຖືກຕ້ອງສອດຄ່ອງກັບກົດໝາຍ, ລະບຽບການ ແລະ ຫຼັກການ. ຈັນຍາບັນຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ [2] ສະແດງອອກ ດັ່ງລຸ່ມນີ້:

### 1. ຄວາມສັດຊື່, ບໍລິສຸດ

ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຕ້ອງມີຄວາມສັດຊື່ບໍລິສຸດໃນການປະຕິບັດໜ້າທີ່ ຂອງຕົນຢູ່ສະເໝີ, ບໍ່ຫຼົງໄຫຼນຳອະບາຍຍະມຸກຕ່າງໆ, ຍົກສູງຜົນປະໂຫຍດຂອງຄູ່ກໍລະນີທັງສອງຝ່າຍ, ບໍ່ມີຜົນປະໂຫຍດສ່ວນຕົວນຳຂໍ້ຂັດແຍ່ງທີ່ຕົນຮັບຜິດຊອບ. ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຕ້ອງມີການປະພຶດດ້ວຍຄວາມບໍລິສຸດຜຸດຜ່ອງ ແລະ ຈິງໃຈຕໍ່ສິດຜົນປະໂຫຍດຂອງຜູ້ມາໃຊ້ບໍລິການ, ບໍ່ສໍ້ໂກງ ແລະ ບໍ່ຮັບສິນບົນ. ຍາມໃດກໍຕ້ອງຢຶດໝັ້ນ ແລະ ກະທຳແຕ່ສິ່ງທີ່ຊອບທຳ ຕາມລະບຽບກົດໝາຍ, ເດັດດ່ຽວຕໍ່ສູ້ກຳຈັດປັດເປົ່າສິ່ງທີ່ຂັດກັບລະບຽບກົດໝາຍ, ລະເມີດຕໍ່ສິດຜົນປະໂຫຍດຂອງຄູ່ກໍລະນີ ເຮັດໃຫ້ສັງຄົມມີຄວາມເປັນທຳ. ແຕ່ຖ້າຢາກໃຫ້ສັງຄົມໄດ້ຮັບຄວາມເປັນທຳນັ້ນ ກ່ອນອື່ນຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຈະຕ້ອງມີຄວາມເປັນທຳຢູ່ໃນຕົວຕົນເອງກ່ອນ. ຖ້າຫາກມີຄວາມເປັນທຳຢູ່ໃນຈິດໃຈແລ້ວ ກໍຈະກະທຳດ້ວຍຄວາມບໍລິສຸດ, ຍຸຕິທຳ ແລະ ຜົນທີ່ເກີດຕາມມານັ້ນ ບໍ່ພຽງແຕ່ເປັນຜົນດີໃຫ້ແກ່ຕົນເອງ ແຕ່ຫາກເປັນຜົນດີຕໍ່ສັງຄົມອີກດ້ວຍ.

### 2. ຄວາມເປັນເອກະລາດ

ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຕ້ອງປະຕິບັດໜ້າທີ່ ຂອງຕົນດ້ວຍຄວາມເປັນກາງ ແລະມີຄວາມເປັນເອກະລາດ ເຊັ່ນ: ບໍ່ຄວນຈະເຂົ້າຂ້າງເຂົ້າຂາຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫຼື ມີພຶດຕິກຳໃດໜຶ່ງທີ່ສະແດງໃຫ້ເຫັນເຖິງຄວາມບໍ່ເປັນກາງ ຫຼື ບໍ່ຄວນຮັບສິນບົນ ຈາກຄູ່ກໍລະນີ.

### 3. ຄວາມເປັນກາງ

ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ມີໜ້າທີ່ໃຫ້ຄວາມຍຸຕິທຳແກ່ຄູ່ກໍລະນີ, ຕ້ອງປະຕິບັດໜ້າທີ່ດ້ວຍຄວາມທ່ຽງທຳ, ຖືກຕ້ອງຕາມກົດໝາຍ ແລະ ຄວາມຈິງ. ນອກຈາກນັ້ນ, ກໍຍັງຕ້ອງສະແດງອອກໃຫ້ສັງຄົມໄດ້ຮູ້ ແລະ ເຫັນນຳຢ່າງ

[2] ປຶ້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປີ 2017 ໜ້າ 15

ຈະແຈ້ງໃນການປະຕິບັດໜ້າທີ່ຂອງຕົນ. ເຖິງວ່າຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ມີສິດອຳນາດຕາມກົດໝາຍອະນຸຍາດໃຫ້ດຳເນີນການແກ້ໄຂຂໍ້ຂັດແຍ່ງຕ່າງໆທີ່ເກີດຂຶ້ນ ເພື່ອເຮັດໃຫ້ສັງຄົມມີຄວາມສະຫງົບສຸກ ແລະ ມີຄວາມເປັນທຳຢູ່ໃນສັງຄົມກໍຕາມ, ແຕ່ອຳນາດແຫ່ງກົດໝາຍດັ່ງກ່າວນັ້ນ ອາດຈະກະທົບໂດຍກົງຕໍ່ຜົນປະໂຫຍດ ຂອງຜູ້ມາໃຊ້ບໍລິການ. ສະນັ້ນ, ຈຶ່ງສົມຄວນໃຫ້ມີກົດຈັນຍາບັນຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ເພື່ອເປັນບັນທັດຖານໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງ.

**4. ການບໍ່ມີຜົນປະໂຫຍດກັບຂໍ້ຂັດແຍ່ງ**

ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຕ້ອງຫຼີກເວັ້ນການມີຜົນປະໂຫຍດຕໍ່ຂໍ້ຂັດແຍ່ງທີ່ຕົນຮັບຜິດຊອບ. ຖ້າຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຫາກມີສ່ວນໄດ້ສ່ວນເສຍໃນຂໍ້ຂັດແຍ່ງທີ່ຕົນຮັບຜິດຊອບແກ້ໄຂແລ້ວ, ກໍຈະເຮັດໃຫ້ການແກ້ໄຂຂໍ້ຂັດແຍ່ງບໍ່ມີຄວາມຍຸຕິທຳແກ່ຄູ່ກໍລະນີຝ່າຍໃດໜຶ່ງ, ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນນັ້ນ ກໍຕ້ອງພະຍາຍາມສ້າງໃຫ້ຝ່າຍຂອງຕົນໄດ້ປຽບຢູ່ສະເໝີ ແລະ ສຸດທ້າຍກໍຈະສ້າງຄວາມອັບປະໂຫຍດໃຫ້ແກ່ຄູ່ກໍລະນີອີກຝ່າຍຊຶ່ງບໍ່ແມ່ນຝ່າຍທີ່ຕົນໄດ້ຮັບຜົນປະໂຫຍດ. ສະນັ້ນ, ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຕ້ອງຖອນຕົວອອກຈາກຂໍ້ຂັດແຍ່ງນັ້ນຖ້າເຫັນວ່າຕົນມີສ່ວນກ່ຽວຂ້ອງກັບຜົນປະໂຫຍດໃນຂໍ້ຂັດແຍ່ງນັ້ນ.

**5. ຄວາມຮັບຜິດຊອບ ຕໍ່ໜ້າກົດໝາຍ**

**+ ການແຈ້ງສາຍພົວພັນຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ**

ກ່ອນເຂົ້າຮັບໜ້າທີ່ແກ້ໄຂຂໍ້ຂັດແຍ່ງໃດໜຶ່ງ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຕ້ອງແຈ້ງສາຍພົວພັນຂອງຕົນຕໍ່ຄູ່ກໍລະນີ ເພື່ອສະແດງຄວາມບໍລິສຸດໃຈວ່າ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ບໍ່ມີຜົນປະໂຫຍດໃນຂໍ້ຂັດແຍ່ງ, ບໍ່ເປັນຍາດຕິພີ່ນ້ອງ ແລະ ບໍ່ມີຂໍ້ຂັດແຍ່ງກັບຄູ່ກໍລະນີ ຝ່າຍໃດໜຶ່ງ.

**+ ການບໍ່ມີອະຄະຕິຕໍ່ຄູ່ກໍລະນີໃດໜຶ່ງ**

ໃນການແກ້ໄຂຂໍ້ຂັດແຍ່ງໃດໜຶ່ງ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຕ້ອງບໍ່ມີອະຄະຕິຕໍ່ຄູ່ກໍລະນີຝ່າຍໃດໜຶ່ງ ຈຶ່ງຈະເຮັດໃຫ້ມີຄວາມຍຸຕິທຳໃນການແກ້ໄຂຂໍ້ຂັດແຍ່ງນັ້ນ, ການມີອະຄະຕິ ອາດຈະສະແດງອອກໃນຫຼາຍດ້ານ ເຊັ່ນ: ການໃຫ້ໂອກາດຄູ່ກໍລະນີບໍ່ເທົ່າກັນ, ການເວົ້າຈາ ຫຼື ສະແດງພຶດຕິກຳ ຊຶ່ງເຮັດໃຫ້ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ໄດ້ປຽບ ຫຼື ເສຍປຽບ.

**6. ການພົວພັນຄູ່ກໍລະນີ**

ການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ ສາມາດພົວພັນຢ່າງໃກ້ຊິດກັບຄູ່ກໍລະນີ ເພື່ອກຳໃຫ້ໄດ້ຂໍ້ສະເໜີ ແລະ ຈຸດປະສົງ ຂອງຄູ່ກໍລະນີແຕ່ລະຝ່າຍ ເພື່ອສາມາດໄຈ້ແຍກແຕ່ລະປະເດັນຂັດແຍ່ງ ແລະ ອະທິບາຍຊີ້ແຈງ, ຊັກຈູງໃຫ້ຄູ່ກໍລະນີສາມາດຕົກລົງກັນໄດ້. ການພົວພັນກັບຄູ່ກໍລະນີນັ້ນ ຕ້ອງຍຶດຖືຈັນຍາບັນ ຂອງຜູ້ໄກ່ເກ່ຍ ໂດຍປາສະຈາກການເຂົ້າຂ້າງອອກຂາ ຫຼື ຫາຜົນປະໂຫຍດຈາກຄູ່ກໍລະນີ. ສຳລັບການຕັດສິນພາຍຫຼັງ ໄດ້ຮັບການແຕ່ງຕັ້ງຜູ້ຕັດສິນແລ້ວ ຕະຫຼອດໄລຍະເວລາຂອງການດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນ ຜູ້ຕັດສິນ ບໍ່ຄວນຕິດຕໍ່ພົວພັນກັບຄູ່ກໍລະນີຝ່າຍໃດໜຶ່ງໂດຍລຳພັງ ບໍ່ວ່າໃນໂມງການ ຫຼື ນອກໂມງການ ຫຼື ໃນງານສ້າງສັນຕ່າງໆ ທັງນີ້ ກໍເພື່ອຫຼີກລ້ຽງການເຂົ້າຂ້າງອອກຂາ ຫຼື ຫາຜົນປະໂຫຍດຈາກຄູ່ກໍລະນີ ທີ່ຈະເຮັດໃຫ້ການແກ້ໄຂຂໍ້ຂັດແຍ່ງນັ້ນບໍ່ໄດ້ຮັບຄວາມເປັນທຳ.

**7. ຮັກສາຄວາມລັບ**

ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ດຳເນີນການແກ້ໄຂຂໍ້ຂັດແຍ່ງໃດໜຶ່ງຢູ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະຕ້ອງບໍ່ເປີດເຜີຍທຸກຂໍ້ມູນ, ຫຼັກຖານ ແລະ ເອກະສານຕ່າງໆ ທີ່ພົວພັນກັບການແກ້ໄຂຂໍ້ຂັດແຍ່ງ. ຖ້າຫາກຖືກເປີດເຜີຍອອກສູ່ພາຍນອກ ຈະສ້າງຄວາມເສຍຫາຍໃຫ້ແກ່ຄູ່ກໍລະນີ.

# LECTURE 5

## ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

## COST OF ECONOMIC DISPUTES RESOLVING

**ໃນບົດນີ້ຢາກເນັ້ນໃຫ້ບັນດາທ່ານຮັບຮູ້ກ່ຽວກັບຄວາມໝາຍຄ່າທຳນຽມ, ຄ່າລະການ ແລະ ຄ່າແຮງງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

### 1. ຄ່າທຳນຽມ

ຄ່າທຳນຽມ ແມ່ນພັນທະທາງກົງ ໃນການເກັບຄ່າສິດຄຸ້ມຄອງບໍລິຫານຂອງລັດ ຈາກຄູ່ກໍລະນີ.ໃນການໄກ່ເກ່ຍນັ້ນ ໃຫ້ຄູ່ກໍລະນີ ຈ່າຍຄ່າທຳນຽມຄົນລະເຄິ່ງ ກ່ອນການດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງ ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ຢ່າງອື່ນ. ສຳລັບການຕັດສີນນັ້ນ ໃຫ້ຄູ່ກໍລະນີຮັບຜິດຊອບຈ່າຍຄ່າທຳນຽມ ຕາມທີ່ໄດ້ກຳນົດໄວ້ໃນຄຳຕັດສີນ. ອັດຕາການເກັບຄ່າທຳນຽມ ໃຫ້ປະຕິບັດຕາມລະບຽບການທີ່ລັດປະກາດໃຊ້ໃນແຕ່ລະໄລຍະ.

ໃບເກັບຄ່າທຳນຽມ ແມ່ນນຳໃຊ້ເພື່ອເກັບຄ່າສິດຄຸ້ມຄອງບໍລິຫານຂອງລັດຈາກບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງສັງຄົມຂັ້ນຕ່າງໆ ທີ່ເຄື່ອນໄຫວທາງດ້ານເສດຖະກິດ ແລະ ສັງຄົມ ໂດຍຜ່ານການບໍລິການຂອງລັດ,ຈາກການຢັ້ງຢືນ ແລະ ການອະນຸຍາດກ່ຽວກັບວຽກງານຕ່າງໆ ເພື່ອປະກອບສ່ວນໂດຍກົງເຂົ້າງົບປະມານຂອງລັດ.

### 2. ຄ່າບໍລິການ

ຄ່າບໍລິການ ແມ່ນການເກັບຄ່າບໍລິການວຽກງານທາງດ້ານບໍລິຫານວິຊາການ ຈາກຄູ່ກໍລະນີ.
ການເກັບຄ່າບໍລິການ ໃຫ້ປະຕິບັດຕາມລະບຽບການທີ່ລັດປະກາດໃຊ້ໃນແຕ່ລະໄລຍະ ຊຶ່ງຜູ້ຮ້ອງຂໍເປັນຜູ້ຮັບຜິດຊອບຈ່າຍກ່ອນ.

ຄ່າບໍລິການໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຄ່າໃຊ້ຈ່າຍທີ່ຄູ່ກໍລະນີຝ່າຍຮ້ອງຂໍ ຕ້ອງໄດ້ນຳມາວາງໄວ້ຢູ່ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນເວລາຍື່ນຄຳຮ້ອງຂໍ ເພື່ອນຳໃຊ້ເຂົ້າໃນການໄກ່ເກ່ຍ ຫຼື ການຕັດສີນ ເຊັ່ນ ສິ່ງໝາຍເຊີນ, ສຳເນົາເອກະສານ, ຈັດປະຊຸມ ແລະ ອື່ນໆ.

### 3. ຄ່າແຮງງານ

ຄ່າແຮງງານ ແມ່ນຄ່າຕອບແທນໃນການເຄື່ອນໄຫວວຽກງານ ຂອງຜູ້ໄກ່ເກ່ຍ, ຜູ້ຕັດສີນ, ຊ່ຽວຊານ ຫຼື ຜູ້ຊຳນານງານ. ຄ່າແຮງງານ ຕ້ອງຊຳລະຢູ່ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນຮ້ອງຂໍນັ້ນ ແລະ ຕ້ອງມີບົດບັນທຶກໄວ້ເປັນຫຼັກຖານ. ລະບຽບການກ່ຽວກັບຄ່າແຮງງານ ແມ່ນກະຊວງຍຸຕິທຳ ເປັນຜູ້ຄົ້ນຄວ້າສະເໜີຕໍ່ລັດຖະບານພິຈາລະນາຮັບຮອງ.

## LECTURE 6

## ນະໂຍບາຍ, ຫຼັກການ ແລະ ມາດຕາການປົກປ້ອງຜົນ ປະໂຫຍດຂອງຄູ່ກໍລະນີ ກ່ຽວກັບວຽກງານແກ້ໄຂຂໍ້ ຂັດແຍ່ງທາງດ້ານເສດຖະກິດ

## POLICIES, PRINCIPLES AND CLAUSES FOR THE PROTECTION OF THE INTERESTS OF THE PARTIES INVOLVED IN RESOLVING ECONOMIC DISPUTES

**ໃນບົດນີ້ຢາກຍົກໃຫ້ເຫັນນະໂຍບາຍຕໍ່ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສະບັບປີ 2018 ໄດ້ກຳນົດນະໂຍບາຍຂອງລັດ ວຽກງານກ່ຽວກັບແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄວ້ວ່າ: ລັດສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ບຸກຄົນ, ນິຕິບຸກ ຄົນ ຫຼື ການ ຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ຫຼື ຕ່າງປະເທດ ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສິນຢ່າງສັນຕິວິທີ. ລັດອຳນວຍຄວາມສະດວກໃຫ້ສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສາມາດນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ ຕາມກົດໝາຍຢ່າງມີປະສິດທິຜົນ. ລັດສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນພາຍໃນ ຫຼື ຕ່າງປະເທດ ເຂົ້າຮ່ວມພັດທະນາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລວມທັງສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ຫຼື ຕ່າງ ປະເທດ ມີສິດເລືອກເອົາການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍໃຕ້ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ[3].

ຕໍ່ນະໂຍບາຍດັ່ງກ່າວເຫັນໄດ້ວ່າ ລັດຖືເອົາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນໜຶ່ງໃນວຽກງານບູລິມະສິດ ປະກອບສ່ວນເຂົ້າໃນການແກ້ໄຂບັນຫາທີ່ເກີດຂຶ້ນຈາກການດຳເນີນທຸລະກິດ ຂອງບຸກຄົນ, ນິຕິບຸກ ຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ແນໃສ່ຍົກສູງສະຕິເຄົາລົບ ແລະ ຈັດຕັ້ງປະຕິບັດກົດໝາຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງນັກທຸລະກິດ ສົ່ງເສີມການພັດທະນາທຸລະກິດໃຫ້ເຕີບໃຫຍ່ຂະ ຫຍາຍຕົວ ແລະ ມີການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຊຶ່ງເຮັດໃຫ້ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດ ຖະກິດໄດ້ຮັບການເຜີຍແຜ່ໃຫ້ສັງຄົມຮັບຮູ້, ເຂົ້າໃຈ ແລະ ໄດ້ຮັບການຈັດຕັ້ງປະຕິບັດ ລັດໄດ້ໂຄສະນາເຜີຍແຜ່ລະບຽບກົດໝາຍທີ່ກ່ຽວຂ້ອງ ພ້ອມທັງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ນັດທຸລະກິດ ໃນການເຂົ້າເຖິງວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄືການນຳເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດໄປແກ້ໄຂຢູ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

---

[3] ກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018, ມາດຕາ 4

# LECTURE 7

# ຄວາມຮູ້ກ່ຽວກັບທັກສະການໄກ່ເກ່ຍ

# KNOWLEDGE OF MEDIATION SKILLS

**ໃນບົດນີ້ຢາກຍົກໃຫ້ເຫັນຄວາມສຳຄັນໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ**

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍວິທີການໄກ່ເກ່ຍ ມີຄວາມສຳຄັນແກ່ຄູ່ກໍລະນີ ເນື່ອງຈາກການແກ້ໄຂຂໍ້ຂັດແຍ່ງດ້ວຍວິທີນີ້ສາມາດຮັກສາເປັນຄວາມລັບ, ຮັກສາໄດ້ຄວາມສາມັກຄີ, ຮັບປະກັນຄວາມວ່ອງໄວ ແລະ ເປັນການປະຢັດຄ່າໃຊ້ຈ່າຍໃຫ້ແກ່ຄູ່ກໍລະນີ.

ເປັນລະບົບແກ້ໄຂຂໍ້ຂັດແຍ່ງທີ່ສ້າງຂຶ້ນໂດຍລັດ ແລະ ຖືກຮັບຮູ້ໂດຍສາກົນປະກອບສ່ວນທີ່ສຳຄັນເຂົ້າໃນການຫຼຸດຜ່ອນການແກ້ໄຂຄະດີຢູ່ສານປະຊາຊົນ.

ເປັນການຫັນເຂົ້າສູ່ລະບົບການແກ້ໄຂຂໍ້ຂັດແຍ່ງສາກົນເທື່ອລະກ້າວ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກຂອງສູນ ແລະ ຫ້ອງການການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຄູ່ກໍລະນີ, ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ແກ້ໄຂບັນຫາໃຫ້ແທດເໝາະກັບສະພາວະຄວາມເປັນຈິງຂອງຂໍ້ຂັດແຍ່ງບົນພື້ນຖານຄວາມສະໝັກໃຈຂອງຄູ່ກໍລະນີໂດຍບໍ່ມີການບັງຄັບນາບຂູ່[4], ບໍ່ມີການຈຳແນກເພດ, ເຊື້ອຊາດ, ສາສະໜາ, ສັນຊາດ, ຊົນເຜົ່າຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລຳເນົາ, ບໍ່ເຂົ້າຂ້າງອອກຂາ, ບໍ່ມີການແຊກແຊງຈາກພາຍນອກ, ຖືເອົາຄຸນນະທຳ ເຫັນອົກເຫັນໃຈກັນຂອງຄູ່ກໍລະນີ ແລະ ພິຈາລະ ນາແກ້ໄຂບົນພື້ນຖານກົດໝາຍ ແລະ ບຽບການ.

ເປັນວິທີການແກ້ໄຂຂໍ້ຂັດແຍ່ງທີ່ຍຸຕິທຳ, ມະນຸດສະທຳ ແລະ ມີຂະບວນການທີ່ກະທັດຮັດ, ບໍ່ຜ່ານຫຼາຍຂັ້ນຕອນເຮັດໃຫ້ຄູ່ກໍລະນີປະຢັດຄ່າໃຊ້ຈ່າຍ ແລະ ເວລາ;.

ຂໍ້ຂັດແຍ່ງທີ່ຖືກນຳມາພິຈາລະນາແກ້ໄຂນັ້ນແມ່ນບໍ່ສາມາດເປີດເຜີຍສູ່ສັງຄົມ ເວັ້ນເສຍແຕ່ໄດ້ຮັບອະນຸ ຍາດຈາກຄູ່ກໍລະນີ.

ເປັນການປະກອບສ່ວນທີ່ສຳຄັນເຂົ້າໃນການສ້າງຄວາມປອງດອງ, ຄວາມເປັນລະບຽບຮຽບຮ້ອຍໃຫ້ແກ່ສັງຄົມແນ່ໃສ່ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມຂະຫຍາຍຕົວ ແລະ ຍືນຍົງ.

---

[4] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 9

## LECTURE 8

## ຄວາມຮູ້ກ່ຽວກັບທັກສະການແກ້ໄຂຂໍ້ຂັດແຍ່ງທາງ ດ້ານເສດຖະກິດດ້ວຍການກຳມະການຕັດສິນ

## KNOWLEDGE ON ECONOMIC DISPUTE BY ARBITRATION RESOLUTION SKILLS

# Lecture 8

# ຄວາມຮູ້ກ່ຽວກັບທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການກຳມະການຕັດສິນ

# Knowledge on economic dispute by arbitration resolution skills

**ໃນບົດນີ້ຢາກເນັ້ນໃຫ້ເຫັນຄວາມສຳຄັນໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍກຳມະການຕັດສິນ**

ທັກສະຂອງຜູ້ຕັດສັດສິນ ຫຼື ຄະນະກຳມະການຕັດສິນ ແມ່ນສ່ວນປະກອບທີ່ມີຄວາມສຳຄັນທີ່ສຸດ ຕໍ່ການດຳເນີນການແກ້ໄຂບັນຫາສັງຄົມເວົ້າລວມ ການແກ້ໄຂຂໍ້ຂັດແຍ່ງຂັດແຍ່ງທາງດ້ານເສດຖະກິດເວົ້າສະເພາະ. ຍ້ອນວ່າ ທັກສະຂອງການຕັດສິນ ໝາຍເຖິງບຸກຄະລິກ, ທັດສະນະການປະພຶດ, ເຕັກນິກການປາກເວົ້າ, ການວາງຕົວທີ່ເໝາະສົມ ຂອງຜູ້ມີສິດອຳນາດໃນການນຳພາວຽກງານໃດໜຶ່ງໃຫ້ສຳເລັດ.

ໂດຍທົ່ວໄປແລ້ວ ໃນເມື່ອມີຂໍ້ຂັດແຍ່ງກັນເກີດຂຶ້ນແລ້ວ ແຕ່ລະຝ່າຍ ຕ່າງກໍມີວິທີການ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນເອງ ທີ່ດີທີ່ສຸດ ຊຶ່ງຖ້າບໍ່ມີການວາງແຜນການຄົ້ນຄ້ວາ, ສຶກສາວິເຄາະ ຂໍ້ມູນຫຼັກຖານ ທີ່ຮັດກຸມແລ້ວບໍ່ສາມາດຊອກເຫັນໄດ້ຄວາມຜິດ ຂອງຝ່າຍທີ່ບໍ່ປະຕິບັດຕາມສັນຍາ ນັ້ນ.  ໃນເມື່ອຊອກຂໍ້ມູນຫຼັກຖານບໍ່ຊັດເຈນ, ບໍ່ແທດຕົວຈິງ  ແມ່ນບໍ່ສາມາດດຳເນີນການຕັດສິນທີ່ຖືກຕ້ອງ ແລະ ເປັນທຳ ແລ້ວນຳໄປສູ່ ການບໍ່ສາມາດປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ກໍລະນີໄດ້.

ດັ່ງນັ້ນ, ທັກສະ ການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ນອກຈາກຈະເປັນວິທີການທີ່ສຳຄັນຕໍ່ການປົກປ້ອງສິດ ແລະ ແລະ ຜົນປະໂຫຍດ ຂອງຄູ່ກໍລະນີ ກໍຄືຂອງສັງຄົມ ແລ້ວ ທັກສະການຕັດສິນທີ່ດີຍັງປະກອບສ່ວນເຂົ້າໃນການສ້າງຄວາມເຊື່ອຖືໃຫ້ຄູ່ກໍລະນີ, ກຸ່ມຄົນ ແລະ ສັງຄົມ ໃຫ້ມີຄວາມເຊື່ອຖື ແລະ ເຫຼື້ອມໃສ່ຕໍ່ຄວາມສັກສິດຂອງກົດໝາຍ, ຄວາມແນ່ນອນໃນການດຳເນີນການແກ້ໄຂບັນຫາຂອງອົງກອນ ແລະ ຄຸນວຸດທິ ກໍຄືຄຸນສົມບັດ ແລະ ປະສົບການຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ. ທັງໝົດນັ້ນ ໄດ້ປະກອບສ່ວນເຂົ້າໃນຫຼາຍດ້ານ ຂອງສັງຄົມໄປພ້ອມໆກັນ ເຊັ່ນ:

1) ປະກອບສ່ວນເຂົ້າໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອຫຼຸດຜ່ອນການຮ້ອງຟ້ອງໄປຍັງສານປະຊາຊົນ;

2) ສ້າງສະຕິເຄົາລົບກົດໝາຍ ໃນວົງການທຸລະກິດ ພ້ອມກັນມີສະຕິຕໍ່ການຈັດຕັ້ງປະຕິບັດສັນຍາ ປະຕິ ບັດກົດໝາຍຢ່າງຖືກຕ້ອງ ເພື່ອປະກອບເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຢູ່ ສປປ ລາວເທື່ອລະກ້າວ;

3) ຮັບປະກັນແກ້ໄຂຂໍຂັດແຍ່ງໃຫ້ບຸກຄົນ ,ນິຕິບຸກຄົນ ແລະ ອົງການຈັດຕັ້ງ ກໍຄືພົນລະເມືອງທຸກຄົນຢ່າງຖືກຕ້ອງ ,ວ່ອງໄວ ,ຮັກສາຄວາມລັບ ,ປະຢັດຄ່າໃຊ້ຈ່າຍ ,ມີລັກສະນະວິຊາການ ແລະ ບໍ່ກະທົບກະ ເທືອນເຖິງຊື່ສຽງກຽດສັກສີຂອງຄູ່ກໍລະນີ, ຍັງສາມາດປົກປ້ອງສິດຜົນປະໂຫຍດອັນຊອບທຳ ແລະ ສິດເສລີພາບ ຂອງຄູ່ກໍລະນີທີ່ເຂົ້າຮ່ວມໃນການດຳເນີນການຕັດສິນ;

4) ເປັນການປະກອບສ່ວນຊຸກຍູ້ການດຳເນີນການຜະລິດ-ທຸລະກິດ ໃຫ້ຂະຫຍາຍຕົວ ສາມາດມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ທັງເປັນການສ້າງສະພາບແວດລ້ອມເອື້ອອຳນວຍ ໃຫ້ແກ່ນັກລົງທຶນທັງພາຍໃນ, ຕ່າງປະເທດ ແລະ ເປັນການປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

# LECTURE 9

# ທັກສະການຄົ້ນຄ້ວາຄຳຮ້ອງ ແລະ ການແນະນຳຄູ່ກໍລະນີ ໃນການຕັດສິນ

# APPLICATION RESEARCH SKILLS AND THE GUIDANCE FOR BOTH PARTIES

**ໃນບົດນີ້ຢາກເນັ້ນໃຫ້ເຫັນຄວາມໝາຍຂອງການຄົ້ນຄວ້າຄຳຮ້ອງຂໍ ແລະ ການຄົ້ນຄວ້າຄຳແກ້ຄຳຮ້ອງຂໍ**

## 1. ການຄົ້ນຄວ້າຄຳຮ້ອງຂໍ

ການຄົ້ນຄວ້າສຳນວນເອກະສານຄຳຮ້ອງຂໍ ຖືເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍພ້ອມດ້ວຍເອກະສານທີ່ປະກອບແລ້ວ ພະແນກສັງລວມ ແລະ ຄຸ້ມຄອງຂໍ້ມູນຂ່າສານ ຂອງສູນ ຫຼື ໜ່ວຍງານສັງລວມ ແລະ ຄຸ້ມຄອງຂໍ້ມູນຂ່າສານ ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ນອກຈາກຈະກວດກາຄຳຮ້ອງຂໍ ແລະ ເອກະສານປະກອບໃນເບື້ອງຕົ້ນແລ້ວ ມີໜ້າທີ່ປະກອບເປັນສຳນວນຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອນຳສະເໜີຕໍ່ຫົວໜ້າສູນ ຫຼື ຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາ.

## 2. ການຄົ້ນຄວ້າຄຳແກ້ຄຳຮ້ອງຂໍ

ການແກ້ຄຳຮ້ອງຂໍ ແມ່ນການນຳໃຊ້ສິດໃນການໂຕ້ແຍ່ງເປັນລາຍລັກອັກສອນຂອງຄູ່ກໍລະນີອີກຝ່າຍໜຶ່ງພາຍ ຫຼັງທີ່ໄດ້ເຂົ້າມາສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ການແກ້ຄຳຮ້ອງຂໍນັ້ນ ແມ່ນການຊີ້ໃຫ້ເຫັນວ່າຄູ່ກໍລະນີອີກຝ່າຍໜຶ່ງ ໄດ້ຮັບຮູ້ວ່າຕົນໄດ້ມີຂໍ້ຂັດແຍ່ງກ່ຽວກັບຜົນປະໂຫຍດທີ່ເກີດຈາກການລະເມີດສັນຍາການ ດຳເນີນທຸລະກິດກັບຄູ່ກໍລະນີທີ່ໄດ້ຍື່ນຄຳຮ້ອງຂໍ ແລະ ຄຽງຄູ່ກັບການແກ້ຄຳຮ້ອງຂໍນັ້ນ ຄູ່ກໍລະນີຝ່າຍຖືກຮ້ອງຂໍ ກໍສາມາດຍື່ນຄຳຮ້ອງຂໍແຍ່ງ ໃນກໍລະນີທີ່ເຫັນວ່າຝ່າຍທີ່ຮ້ອງຂໍຍັງມີພັນທະທີ່ຕ້ອງປະຕິບັດຕໍ່ຕົນ ເພື່ອຮ້ອງຂໍແຍ່ງໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂໄປພ້ອມກັນ.

ພາຍຫຼັງຜູ້ຖືກຮ້ອງຂໍ ໄດ້ຮັບຄຳຮ້ອງຂໍພ້ອມເອກະສານທີ່ກ່ຽວຂ້ອງແລ້ວ ແມ່ນໃຫ້ສົ່ງຄຳແກ້ຄຳຮ້ອງຂໍ ພາຍໃນສິບຫ້າວັນ ເນື້ອໃນຄຳແກ້ຄຳຮ້ອງຂໍນັ້ນ ແມ່ນສະແດງເຖິງການຮັບຮູ້ ຫຼື ປະຕິເສດ ຫຼື ຮ້ອງຂໍແຍ່ງຕໍ່ຄຳຮ້ອງຂໍ ຕາມເນື້ອໃນທີ່ໄດ້ກຳນົດໄວ້ ໃນມາດຕາ 18 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

# LECTURE 10

# ທັກສະການຄົ້ນຄ້ວາຄຳຮ້ອງ<br>ແລະ ການແນະນຳຄູ່ກໍລະນີ ໃນການໄກ່ເກ່ຍ

# SKILLS IN RESEARCHING CLAIMS AND GUIDING PARTIES IN MEDIATION

**ໃນບົດນີ້ຈະເນັ້ນໃຫ້ເຫັນ ການແຕ່ງຕັ້ງຜູ້ໄກ່ເກ່ຍ ແລະ ຄະນະກຳມະການໄກ່ເກ່ຍ**

ການແຕ່ງຕັ້ງຜູ້ໄກ່ເກ່ຍ, ຄະນະໄກ່ເກ່ຍ ແມ່ນສິດ ແລະ ໜ້າທີ່ຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍຫຼັງທີ່ຄູ່ກໍລະນີເລືອກໄດ້ຜູ້ໄກ່ເກ່ຍໜຶ່ງ ຫຼື ຫຼາຍຄົນ ຫຼື ພາຍຫຼັງທີ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເລືອກໃຫ້ແລ້ວ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງອອກຂໍ້ຕົກລົງແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍພາຍໃນກຳນົດເວລາຫ້າວັນລັດຖະການນັບແຕ່ວັນທີ່ໄດ້ຮັບລາຍຊື່ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍເປັນຕົ້ນໄປ.

ໃນພາກປະຕິບັດກ່ອນການແຕ່ງຕັ້ງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງຈະຕ້ອງໄດ້ຖາມເບິ່ງເຈດຈຳນົງຂອງເປົ້າໝາຍຜູ້ທີ່ຈະແຕ່ງຕັ້ງໃຫ້ເປັນຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍກ່ອນວ່າຜູ້ກ່ຽວສາມາດຮັບເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງດັ່ງກ່າວໄດ້ ຫຼື ບໍ່ ແລະ ຜູ້ກ່ຽວສາມາດຮັບເອົາຄ່າແຮງງານທີ່ໄດ້ຕົກລົງກັບຄູ່ລະນີໄດ້ ຫຼື ບໍ່ ຖ້າຜູ້ໄກ່ເກ່ຍຕອບຮັບແລ້ວ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະ ກິດ ກໍຈະດຳເນີນການແຕ່ງຕັ້ງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍໄດ້, ແຕ່ກົງກັນຂ້າມຖ້າຫາກຜູ້ໄກ່ເກ່ຍບໍ່ສາມາດຮັບເອົາຄ່າແຮງງານຕາມທີ່ໄດ້ຕົກກັນກໍຖືວ່າເປົ້າໝາຍໄດ້ປະຕິເສດບໍ່ຮັບເປັນຜູ້ໄກ່ເກ່ຍ ໃນພາກປະຕິບັດຕົວຈິງບາງກໍລະນີຜູ້ທີ່ເປັນເປົ້າໝາຍນັ້ນສາມາດປະຕິ ເສດຮັບເປັນຜູ້ໄກ່ເກ່ຍໃນກໍລະນີໃດໜຶ່ງດັ່ງນີ້:

- ມີຄວາມໝັ້ນໃຈທາງດ້ານວິຊາສະເພາະໃດໜຶ່ງຂອງຕົນ;
- ບໍ່ສາມາດຕົກລົງຮັບເອົາຄ່າແຮງງານກັບຄູ່ກໍລະນີ ຫຼື ຜູ້ຕັດສິນສອງຄົນທີ່ຖືກເລືອກຈາກຄູ່ກໍລະນີໄດ້;
- ຖືກຊັບຊ້ອນໄປປະຕິບັດໜ້າທີ່ວຽກງານຢູ່ທ້ອງຖິ່ນອື່ນ ຫຼື ຢູ່ຕ່າງປະເທດ;
- ເສຍຊີວິດກະທັນຫັນ.

ການປະຕິເສດເປັນຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍທີ່ໄດ້ກຳນົດໄວ້ຂ້າງເທິງນີ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະແຈ້ງຄືນຫາຄູ່ກໍລະນີ ເພື່ອເຂົ້າສູ່ຂະບວນການເລືອກເອົາຜູ້ໄກ່ເກ່ຍຄືນໃໝ່ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ພາຍຫຼັງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍແລ້ວ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະມອບສຳນວນຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ເພື່ອດຳເນີນການແກ້ໄຂການແກ້ໄຂຂໍ້ຂັດແຍ່ງໃນຂັ້ນຕອນຕໍ່ໄປ.

# LECTURE 11

# ທັກສະການຄົ້ນຄວ້າສຳນວນ ຂໍ້ຂັດແຍ່ງໃນການໄກ່ເກ່ຍ

# SKILLS ON CONFLICT RESOLUTION RESEARCHING

**ໃນບົດນີ້ຈະເນັ້ນກ່ຽວກັບ ການຮັບສຳນວນຂໍ້ຂັດແຍ່ງ**

ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍ, ຄຳແກ້ຄຳຮ້ອງຂໍ ພ້ອມດ້ວຍບັນດາເອກະສານ, ຂໍ້ມູນຫຼັກຖານຕ່າງໆທີ່ປະກອບໃນສຳນວນຄຳຮ້ອງຂໍ ແລະ ຄຳແກ້ຄຳຮ້ອງຂໍ ທີ່ຄູ່ກໍລະນີໄດ້ຍື່ນມາແລ້ວ ພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງໄດ້ກວດກາບັນດາເອກະສານ, ຂໍ້ມູນຫຼັກຖານດັ່ງກ່າວ ແລະ ສິ່ງສຳຄັນຕ້ອງໄດ້ກວດກາເບິ່ງຮູບການໃນການແກ້ໄຂຂໍ້ຂັດແຍ່ງ, ຈຳນວນຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກເກ່ຍ ວ່າມີຄວາມເປັນເອກະພາບກັນແລ້ວບໍ? ໃນກໍລະນີຖ້າຫາກເຫັນວ່າຍັງບໍ່ມີຄວາມເປັນເອກະພາບກັນພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງໄດ້ເຊີນໃຫ້ຄູ່ກໍລະນີທັງສອງຝ່າຍເຂົ້າມາປຶກສາຫາລືເພື່ອໃຫ້ມີຄວາມເປັນເອກະພາບກັນຮູບການໃນການແກ້ໄຂຂໍ້ຂັດແຍ່ງ, ຈຳນວນຜູ້ໄກ່ເກ່ຍ ຫຼື ຄະ ນະກຳມະການໄກເກ່ຍ. ພາຍຫຼັງທີ່ຄູ່ກໍລະນີທັງສອງຝ່າຍໄດ້ເປັນເອກະພາບກັນແລ້ວພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງໄດ້ແຈ້ງໃຫ້ຄູ່ກໍລະນີເຂົ້າມາຈ່າຍເງິນຄ່າທຳນຽມ ແລະ ຄ່າແຮງງານຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກເກ່ຍຕາມການຕົກລົງເຫັນດີຂອງຄູ່ກໍລະນີ ກັບຜູ້ໄກ່ເກ່ຍ ຫຼື ກຳມະການໄກ່ເກ່ຍ ຢູ່ສູນ ຫຼື ຫ້ອງການແກ້ ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ຫຼັງຈາກນັ້ນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍຕ້ອງອອກຂໍ້ຕົກລົງຮັບເອົາຄຳຮ້ອງຂໍ ແລະ ຄຳແກ້ຄຳຮ້ອງຂໍ ຂຶ້ນເປັນສຳນວນຂໍ້ຂັດແຍ່ງ.

ພາຍຫຼັງທີ່ໄດ້ຂຶ້ນເປັນສຳນວນຂໍ້ຂັດແຍ່ງແລ້ວສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງໄດ້ອອກຂໍ້ຕົກລົງແຕ່ງຕັ້ງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຕາມການສະເໜີຂອງຄູ່ກໍລະນີ ແລະ ຄົ້ນຄວ້າຂອງພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນຫ້າວັນ ລັດຖະການ ນັບແຕ່ວັນໄດ້

ຮັບລາຍຊື່ເປັນຕົ້ນໄປ. ຈາກນັ້ນ, ພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງມອບສຳນວນຂໍ້ຂັດແຍ່ງໃຫ້ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ເພື່ອດຳເນີນການແກ້ໄຂຕາມລະບຽບກົດໝາຍ.

ໃນກໍລະນີທີ່ຄູ່ກໍລະນີທັງສອງຝ່າຍ ຫາກຍັງບໍ່ທັນເປັນເອກະພາບກັນກ່ຽວກັບຮູບການແກ້ໄຂຂໍ້ຂັດແຍ່ງ ຝ່າຍໜຶ່ງເລືອກເອົາຮູບການໄກ່ເກ່ຍ, ແຕ່ອີກຝ່າຍໜຶ່ງພັດເລືອກເອົາຮູບການຕັດສິນ. ສະນັ້ນພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງໄດ້ເຊີນໃຫ້ຄູ່ກໍລະນີທັງສອງຝ່າຍເຂົ້າມາປຶກສາຫາລືເພື່ອໃຫ້ມີຄວາມເປັນເອກະພາບກັນຕໍ່ກັບຮູບການໃນການແກ້ໄຂຂໍ້ຂັດແຍ່ງ ແລະ ຜ່ານການປຶກສາຫາລືຄູ່ກໍລະນີທັງສອງຝ່າຍຕ່າງຝ່າຍຕ່າງກໍຍັງຢືນຢັນເອົາຮູບການທີ່ຕົນເລືອກນັ້ນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍບໍ່ສາມາດຮັບເອົາຮັບຄຳຮ້ອງຂໍ, ຄຳແກ້ຄຳຮ້ອງຂໍ ພ້ອມດ້ວຍບັນດາເອກະສານ, ຂໍ້ມູນຫຼັກຖານຕ່າງໆທີ່ປະກອບໃນສຳນວນຄຳຮ້ອງຂໍ ແລະ ຄຳແກ້ຄຳຮ້ອງຂໍ ທີ່ຄູ່ກໍລະນີໄດ້ຍື່ນນັ້ນມາພິຈາລະນາແກ້ໄຂໄດ້ ແລະ ຈະໄດ້ສົ່ງຄຳຮ້ອງຂໍ, ຄຳແກ້ຄຳຮ້ອງຂໍພ້ອມດ້ວຍບັນດາເອກະສານ, ຂໍ້ມູນຫຼັກຖານຕ່າງໆທີ່ປະກອບມານັ້ນຄືນໃຫ້ແກ່ຄູ່ກໍລະນີທັງສອງຝ່າຍ.

# LECTURE 12
# ທັກສະການກະກຽມ ແລະ ດຳເນີນການໄກ່ເກ່ຍ ແລະ ສ້າງບົດບັນທຶກຂອງການໄກ່ເກ່ຍ

## SKILLS TO PREPARE AND CONDUCT MEDIATION AND TAKING A NOTE OF MEDIATION

**ໃນບົດນີ້ຢາກເນັ້ນກ່ຽວກັບການເລື່ອນ ແລະ ການໂຈະການໄກ່ເກ່ຍ**

**1. ການເລື່ອນການໄກ່ເກ່ຍ:**

ການໄກ່ເກ່ຍຂໍ້ຂັດແຍ່ງ ອາດຖືກເລື່ອນໃນກໍລະນີຝ່າຍໃດຝ່າຍໜຶ່ງ ດັ່ງນີ້:[5]

- ຄູ່ກໍລະນີຝ່າຍໃດໜຶ່ງ ບໍ່ໄດ້ເຂົ້າຮ່ວມການໄກ່ເກ່ຍໂດຍມີເຫດຜົນພຽງພໍ;
- ຜູ້ໄກ່ເກ່ຍບໍ່ສາມາດເຂົ້າຮ່ວມການໄກ່ເກ່ຍໄດ້ ຍ້ອນເຈັບເປັນກະທັນຫັນ ຫຼື ມີພາລະກິດອື່ນທີ່ຈຳເປັນ;
- ມີການຖອນຕົວ ຫຼື ການຄ້ານຕົວ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ;
- ມີຄວາມຈຳເປັນຕ້ອງໄດ້ເກັບກຳ ຫຼື ພິເສດຂໍ້ມູນ, ຫຼັກຖານຄືນໃໝ່;

[5] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 29

- ບຸກຄົນອື່ນ ທີ່ມີຄວາມສຳຄັນຕໍ່ການໄກ່ເກ່ຍຂໍ້ຂັດແຍ່ງນັ້ນ ບໍ່ໄດ້ເຂົ້າຮ່ວມໃນການໄກ່ເກ່ຍ.

ໃນກໍລະນີ ມີການເລື່ອນການໄກ່ເກ່ຍນັ້ນ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຫຼື ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງໃຫ້ຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມອື່ນ ພາຍໃນເວລາ ຫ້າ ວັນ ລັດຖະການ.

ການເລື່ອນການໄກ່ເກ່ຍ ຕ້ອງໄດ້ບັນທຶກໄວ້ໃນປຶ້ມຕິດຕາມການດຳເນີນການໄກ່ເກ່ຍຂອງ ສູນ ຫຼືຫ້ອງ ການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**2. ການໂຈະການໄກ່ເກ່ຍ:**

ການໂຈະການໄກ່ເກ່ຍ ແມ່ນ ການຢຸດການໄກ່ເກ່ຍໄວ້ຊົ່ວຄາວ ຍ້ອນມີສະພາບການໃດໜຶ່ງ ທີ່ເປັນອຸປະ ສັກຕໍ່ ການໄກ່ເກ່ຍ.

ການໄກ່ເກ່ຍ ອາດຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:[6]

- ຄູ່ກໍລະນີຝ່າຍໃດໜຶ່ງ ສູນເສຍຄວາມສາມາດທາງດ້ານເສດການປະພຶດ, ເຈັບເປັນຢ່າງກະທັນຫັນ;

- ຄູ່ກໍລະນີຝ່າຍໃດໜຶ່ງເສຍຊີວິດ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກຖືກຍຸບເລີກ ແຕ່ຍັງມີຜູ້ສືບຕໍ່ນຳໃຊ້ສິດ ແລະ ປະຕິບັດພັນທະຢູ່;

- ຄູ່ກໍລະນີຝ່າຍໃດໜຶ່ງ ໄດ້ຍົກຍ້າຍ ຫຼື ອອກຈາກບ່ອນຢູ່ເກົ່າ ຊຶ່ງບໍ່ຮູ້ບ່ອນຢູ່ໃໝ່ ໂດຍມີການຢັ້ງຢືນຈາກ ການຈັດຕັ້ງທີ່ກ່ຽວຂ້ອງ;

- ມີຄວາມຈຳເປັນຕ້ອງລໍຖ້າການພິຈາລະນາຂໍ້ຂັດແຍ່ງ ທີ່ພົວພັນກັບຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ກຳລັງດຳ ເນີນການໄກ່ເກ່ຍຢູ່.

ໃນກໍລະນີ ມີການໂຈະການໄກ່ເກ່ຍນັ້ນ ຫົວໜ້າ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງ ອອກຂໍ້ຕົກລົງໂຈະການໄກ່ເກ່ຍ ແລ້ວແຈ້ງໃຫ້ຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມອື່ນ ພາຍໃນເວລາ ຫ້າ ວັນ ລັດຖະການ.

ການໂຈະການໄກ່ເກ່ຍ ຕ້ອງໄດ້ບັນທຶກໄວ້ໃນປຶ້ມຕິດຕາມການດຳເນີນການໄກ່ເກ່ຍຂອງ ສູນ ຫຼື ຫ້ອງ ການ ແກ້ ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

# LECTURE 13

## ທັກສະການຄົ້ນຄວ້າສຳນວນຂໍ້ຂັດແຍ່ງຂອງກຳມະການ ຕັດສິນແລະ ການກະກຽມ ແລະ ການດຳເນີນກາຕັດສິນ

## ARBITRATOR'S DISPUTE RESOLUTION RESEARCH SKILLS AND ARBITRATION PREPARATION AND CONDUCT

[6] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 30

**ໃນບົດນີ້ຢາກເນັ້ນກ່ຽວກັບການເກັບກຳຂໍ້ມູນຫຼັກຖານ**

ການເກັບກຳຂໍ້ມູນຫຼັກຖານ ແມ່ນການເກັບໂຮມບັນດາຫຼັກຖານທັງໝົດທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ ຊຶ່ງຄູ່ກໍລະນີປະກອບມາໃຫ້ນັ້ນ ເພື່ອນຳມາຄົ້ນຄວ້າ, ໄຈ້ແຍກ ແລະ ຊັ່ງຊາ ຕີລາຄາຫຼັກຖານດັ່ງກ່າວ.

ພາຍຫຼັງທີ່ໄດ້ຄົ້ນຄວ້າບັນດາຂໍ້ມູນຫຼັກຖານຕ່າງໆທີ່ຄູ່ກໍລະນີໄດ້ປະກອບໃນສຳນວນຂໍ້ຂັດແຍ່ງນັ້ນ ຖ້າເຫັນວ່າຍັງມີບັນຫາໃດໜຶ່ງທີ່ຍັງບໍ່ທັນຈະແຈ້ງ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ກໍສະເໜີໃຫ້ຄູ່ກໍລະນີ ຫຼື ຝ່າຍໃດຝ່າຍໜຶ່ງທີ່ນຳຫຼັກຖານບໍ່ຄົບຖ້ວນ ຫຼື ບໍ່ຈະແຈ້ງນັ້ນເອົາຂໍ້ມູນຫຼັກຖານມາໃຫ້ຄົບຖ້ວນ ແລະ ຊີ້ແຈງປະເດັນທີ່ຍັງບໍ່ທັນຈະແຈ້ງ ຫຼື ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນຕ້ອງໄດ້ເກັບກຳຂໍ້ມູນຫຼັກຖານໂດຍກົງ ໂດຍການສອບຖາມຄູ່ກໍລະນີ, ພະຍານ ຫຼື ບຸກຄົນທີ່ສາມທີ່ກ່ຽວຂ້ອງ ຫຼື ອາດຈະເຊີນເອົາຜູ້ຊ່ຽວຊານ, ການຈັດຕັ້ງທີ່ກ່ຽວຂ້ອງມາໃຫ້ການ ຫຼື ໃຫ້ຄວາມກະຈ່າງແຈ້ງ. ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ.

ໃນກໍລະນີທີ່ມີຄວາມຈຳເປັນ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ອາດຈະລົງເກັບກຳຂໍ້ມູນຫຼັກຖານກັບທີ່, ທັງນີ້ກໍເພື່ອເປັນການໄຈ້ແຍກບັນຫາຕ່າງໆຂອງຂໍ້ຂັດແຍ່ງ ແລະ ກ້າວໄປສູ່ການກຳນົດວິທີທາງແກ້ໄຂທີ່ແທດເໝາະກັບຂໍ້ຂັດແຍ່ງຕົວຈິງ ເພື່ອເປັນພື້ນຖານໃນການແກ້ໄຂບັນຫາໃຫ້ຄູ່ກໍລະນີສາມາດຕົກລົງກັນໄດ້ໂດຍສັນຕິວິທີ.

ໃນໄລຍະເວລາທີ່ພິຈາລະນາຂໍ້ຂັດແຍ່ງນັ້ນ ຖ້າຫາກຄູ່ກໍລະນີ ສະເໜີໃຫ້ອອກຄຳສັ່ງຍຶດ, ອາຍັດຊັບ ຫຼື ນຳໃຊ້ມາດຕະການໃດໜຶ່ງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນແລ້ວ. ຖ້າເຫັນວ່າມີຄວາມຈຳເປັນຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຈະສົ່ງຄຳສະເໜີ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງໄປຍັງສານປະຊາຊົນ ເພື່ອພິຈາລະນາອອກຄຳສັ່ງພາຍໃນກຳນົດເວລາ 7 ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

# LECTURE 14

## ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### IMPLEMENTATION OF THE RESOLUTION OF ECONOMIC DISPUTES

**ໃນບົດນີ້ຢາກເນັ້ນກ່ຽວກັບ ເງື່ອນໄຂທາງດ້ານກົດໝາຍ ແລະ ລະບຽບການ ທີ່ພາໃຫ້ມີການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ.**

ເງື່ອນໄຂທາງດ້ານກົດໝາຍ ແລະ ລະບຽບການ ໃນການຈັດຕັ້ງປະຕິບັດຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນນິຕິກຳ ທີ່ເປັນເຄື່ອງມື ແລະ ເປັນບ່ອນອີງໃຫ້ແກ່ອົງການຈັດຕັ້ງ ທີ່ມີພາລະບົດບາດ ໃນການຕິດຕາມການຈັດຕັ້ງປະຕິບັດຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ກໍລະນີ ແລະ ບຸກຄົນທີສາມ. ຖ້າຫາກຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບໍ່ໄດ້ຮັບການຈັດຕັ້ງປະຕິບັດຈະເຮັດໃຫ້ຄູ່ກໍລະນີ ບໍ່ໄດ້ຮັບການໃຊ້ແທນຄວາມເສຍຫາຍ, ບໍ່ໄດ້ຮັບຊັບສິນທີ່ສູນເສຍນັ້ນຄືນມາ ແລະ ອື່ນໆ ພາໃຫ້ຜູ້ອັບປະໂຫຍດ ບໍ່ສາມາດນຳໃຊ້ຊັບສິນ, ເງິນ, ຄຳ ຂອງຕົນເອງເຫຼົ່ານັ້ນ ໄປດຳເນີນທຸລະກິດ, ຄ້າຂາຍ ແລະ ອາດຂາດຄວາມເຊື່ອໝັ້ນຕໍ່ການປະຕິບັດກົດໝາຍ ຊຶ່ງຈະສົ່ງຜົນກະທົບຕໍ່ຄວາມເປັນລະບຽບຮຽບຮ້ອຍຢູ່ໃນສັງຄົມ, ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ, ອາດມີການສະເໜີ ຕໍ່ອົງການຈັດຕັ້ງຕ່າງໆ ເພື່ອໃຫ້ໄດ້ຮັບຜົນປະໂຫຍດທີ່ສູນເສຍໄປນັ້ນຄືນ.

ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນ ແລະ ຕ່າງປະເທດ.

ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ່າງປະເທດ ຫຼື ສາກົນ ແມ່ນການນຳເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາປະຕິບັດໃຫ້ຖືກຕ້ອງ ຕາມສົນທິສັນຍາ ນິວຢອກ 1958, ສົນທິສັນຍາສິງກະໂປ 2019 ແລະ ຄຳແນະນຳຂອງປະທານສານປະຊາຊົນສູງສຸດ ວ່າດ້ວຍການພິຈາລະນາຂອງສານ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

- ກົດໝາຍ **References:**

**ເອກະສານຫຼັກໃນການອ້າງອີງ**


1. ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 52/ສພຊ, ລົງວັນທີ 22/6/2018.
2. ປຶ້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.
3. ປະມວນເອກະສານຝຶກອົບຮົມທັກສະການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ, ການຕັດສິນໂດຍກຳມະການ, 2020;
4. ແລະ ບັນດາເອກະສານອື່ນໆທີ່ໄດ້ລະບຸໃນບັນດາບົດຮຽນແຕ່ລະບົດ.